# ສາລະບານ


**ພາກທີ I ບົດບັນຍັດທົ່ວໄປ 1** **ໜ້າ**

ມາດຕາ 1 ຈຸດປະສົງ.................................................... 1

ມາດຕາ 2 (ປັບປຸງ) ການວັດແທກ.................................................... 2

ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ.................................................... 2

ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດກ່ຽວກັບວຽກງານວັດແທກ.................................................... 4

ມາດຕາ 5 (ປັບປຸງ) ຫຼັກການພື້ນຖານກ່ຽວກັບວຽກງານວັດແທກ.................................................... 4

ມາດຕາ 6 (ປັບປຸງ) ຂອບເຂດການນຳໃຊ້ກົດໝາຍ.................................................... 5

ມາດຕາ 7 ການຮ່ວມມືສາກົນ.................................................... 5

**ພາກທີ II ວຽກງານວັດແທກ**

ມາດຕາ 8 (ປັບປຸງ) ວຽກງານວັດແທກ.................................................... 5

ມາດຕາ 9 (ໃໝ່) ພາຫະນະວັດແທກ.................................................... 6

**ໝວດທີ 1 ຫົວໜ່ວຍວັດແທກ**

ມາດຕາ 10 ຫົວໜ່ວຍວັດແທກ.................................................... 6

ມາດຕາ 11 ການນຳໃຊ້ຫົວໜ່ວຍວັດແທກ.................................................... 7

**ໝວດທີ່ 2 ແມ່ແບບວັດແທກ**

ມາດຕາ 12 (ປັບປຸງ) ແມ່ແບບວັດແທກ.................................................... 7

ມາດຕາ 13 ການຜະລິດແມ່ແບບວັດແທກ.................................................... 8

ມາດຕາ 14 ການນຳໃຊ້ແມ່ແບບວັດແທກ.................................................... 8

ມາດຕາ 15 (ປັບປຸງ) ການກວດທຽບ ແມ່ແບບວັດແທກ.................................................... 9

ມາດຕາ 16 ການເກັບຮັກສາແມ່ແບບວັດແທກ.................................................... 9

ມາດຕາ 17 ການສ້ອມແປງ, ການປ່ຽນ ຫຼື ການລຶບລ້າງ ແມ່ແບບວັດແທກ .............. 9

**ໝວດທີ 3 ເຄື່ອງມື ແລະ ອຸປະກອນ ວັດແທກ**

ມາດຕາ 18 (ປັບປຸງ) ການຜະລິດເຄື່ອງມື ແລະ ອຸປະກອນວັດແທກ ..................... 10

ມາດຕາ 19 (ປັບປຸງ) ການນຳເຂົ້າ ເຄື່ອງມື ແລະ ອຸປະກອນວັດແທກ .................... 10

ມາດຕາ 20 (ປັບປຸງ) ການນຳໃຊ້ເຄື່ອງມື ແລະ ອຸປະກອນວັດແທກ ..................... 10

ມາດຕາ 21 (ປັບປຸງ) ການຈົດທະບຽນເຄື່ອງມື ແລະ ອຸປະກອນວັດແທກ............... 11

ມາດຕາ 22 (ປັບປຸງ) ການບໍລິການສ້ອມແປງເຄື່ອງມື ແລະ ອຸປະກອນວັດແທກ..... 11

ມາດຕາ 23 (ປັບປຸງ) ການກວດຄືນ ................................................................ 11

ມາດຕາ 24 (ປັບປຸງ) ການສອບທຽບ ............................................................... 12

ມາດຕາ 25 (ປັບປຸງ) ການຢັ້ງຢືນ .................................................................... 12

ມາດຕາ 26 (ປັບປຸງ) ການຍົກເລີກການຢັ້ງຢືນ................................................... 13

ມາດຕາ 27 (ໃໝ່) ກິດຈະການວຽກງານວັດແທກ.................................................. 13

ມາດຕາ 28 (ໃໝ່) ລະບຽບການນຳໃຊ້ເຄື່ອງມື ແລະ ອຸປະກອນວັດແທກ ............. 14

**ໝວດທີ 4 ສິນຄ້າຫຸ້ມຫໍ່**

ມາດຕາ 29 (ປັບປຸງ) ສິນຄ້າຫຸ້ມຫໍ່.................................................................. 15

ມາດຕາ 30 ການກຳນົດຄ່າປະລິມານສຸດທິຂອງສິນຄ້າຫຸ້ມຫໍ່................................ 15

ມາດຕາ 31 (ໃໝ່) ເງື່ອນໄຂສຳລັບສິນຄ້າຫຸ້ມຫໍ່ .................................................. 15

**ພາກທີ III ສິດ ແລະ ພັນທະຂອງຜູ້ຜະລິດ, ຜູ້ຂາຍ ແລະ ຜູ້ບໍລິການ**

ມາດຕາ 32 ສິດຂອງຜູ້ຜະລິດ, ຜູ້ຂາຍ ແລະ ຜູ້ບໍລິການ ແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນ ວັດແທກ.......................................................... 16

ມາດຕາ 33 (ປັບປຸງ) ພັນທະຂອງຜູ້ຜະລິດ, ຜູ້ຂາຍ ແລະ ຜູ້ບໍລິການ ແມ່ແບບ ວັດແທກ, ເຄື່ອງມື ແລະ ອຸປະ ກອນ ວັດແທກ ............................... 17

## ພາກທີ IV ຂໍ້ຫ້າມ


ມາດຕາ 34 (ປັບປຸງ) ຂໍ້ຫ້າມສໍາລັບຜູ້ດໍາເນີນທຸລະກິດ ........................................ 18

ມາດຕາ 35 (ປັບປຸງ) ຂໍ້ຫ້າມສໍາລັບເຈົ້າໜ້າທີ່ຄຸ້ມຄອງ ແລະ ກວດກາວຽກງານ ວັດແທກ ........................................ 19


## ພາກທີ V ການແກ້ໄຂຂໍ້ຂັດແຍ່ງ


ມາດຕາ 36 ຫຼັກການແກ້ໄຂຂໍ້ຂັດແຍ່ງ ........................................ 20

ມາດຕາ 37 (ປັບປຸງ) ຮູບການແກ້ໄຂຂໍ້ຂັດແຍ່ງ ........................................ 20

ມາດຕາ 38 ການປະນີປະນອມ ແລະ ການໄກ່ເກ່ຍ ........................................ 21

ມາດຕາ 39 (ປັບປຸງ) ການແກ້ໄຂທາງດ້ານບໍລິຫານ ........................................ 21

ມາດຕາ 40 (ປັບປຸງ) ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ 21

ມາດຕາ 41 (ປັບປຸງ) ການຮ້ອງຟ້ອງຕໍ່ສານປະຊາຊົນ ........................................ 21

ມາດຕາ 42 ການແກ້ໄຂຂໍ້ຂັດແຍ່ງທີ່ມີລັກສະນະສາກົນ ........................................ 21


## ພາກທີ VI ການຄຸ້ມຄອງ ແລະ ການກວດກາວຽກງານວັດແທກ

### ໝວດທີ 1 ການຄຸ້ມຄອງວຽກງານວັດແທກ


ມາດຕາ 43 (ປັບປຸງ) ອົງການຄຸ້ມຄອງວຽກງານວັດແທກ ........................................ 22

ມາດຕາ 44 ສິດ ແລະ ໜ້າທີ່ ຂອງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ........... 22

ມາດຕາ 45 ສິດ ແລະ ໜ້າທີ່ ຂອງພະແນກ ວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນ ........................................ 24

ມາດຕາ 46 (ໃໝ່) ສິດ ແລະ ໜ້າທີ່ຂອງຫ້ອງການວິທະຍາສາດ ແລະ ເຕັກໂນໂລຊີ ເມືອງ, ເທດສະບານ ........................................ 25

ມາດຕາ 47 (ໃໝ່) ສິດ ແລະ ໜ້າທີ່ຂອງຂະແໜງການອື່ນ ........................................ 26


### ໝວດທີ 2 ການກວດກາວຽກງານວັດແທກ

ມາດຕາ 48  ອົງການກວດກາວຽກງານວັດແທກ.................................................. 27

ມາດຕາ 49  ສິດ ແລະ ໜ້າທີ່ ຂອງອົງການກວດກາພາຍໃນ.................................. 27

ມາດຕາ 50 ສິດ ແລະ ໜ້າທີ່ຂອງອົງກາດກວດກາພາຍນອກ............................28

ມາດຕາ 51  ເຈົ້າໜ້າທີ່ຄຸ້ມຄອງ ແລະ ກວດກາວຽກງານວັດແທກ .......................... 28

ມາດຕາ 52 (ໃໝ່)  ເນື້ອໃນການກວດກາວຽກງານວັດແທກ.................................. 28

ມາດຕາ 53 (ໃໝ່)  ການກວດກາຄວາມຖືກຕ້ອງຂອງພາຫະນະວັດແທກ ............... 29

ມາດຕາ 54  ຮູບການກວດກາວຽກງານວັດແທກ................................................ 29

ມາດຕາ 55 (ໃໝ່)  ການປະເມີນຄວາມສອດຄ່ອງຂອງວຽກງານວັດແທກ............... 30

**ພາກທີ VII  ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ**

ມາດຕາ 56  ນະໂຍບາຍຕໍ່ຜູ້ມີຜົນງານ........................................................... 30

ມາດຕາ 57  ມາດຕະການຕໍ່ຜູ້ລະເມີດ............................................................ 31

ມາດຕາ 58  ມາດຕະການສຶກສາອົບຮົມ ........................................................... 31

ມາດຕາ 59  ມາດຕະການທາງວິໄນ ................................................................ 31

ມາດຕາ 60  ມາດຕະການປັບໃໝ.................................................................... 32

ມາດຕາ 61  ມາດຕະການທາງແພ່ງ ................................................................. 32

ມາດຕາ 62  ມາດຕະການທາງອາຍາ................................................................. 32

ມາດຕາ 63  ມາດຕະການໂທດເພີ່ມ................................................................. 32

**ພາກທີ VIII  ບົດບັນຍັດສຸດທ້າຍ**

ມາດຕາ 64  ການຈັດຕັ້ງປະຕິບັດ.................................................................... 32

ມາດຕາ 65  ຜົນສັກສິດ................................................................................ 33

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 014 /ສພຊ

# ມະຕິຕົກລົງ
# ຂອງ
# ສະພາແຫ່ງຊາດແຫ່ງ
# ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
# ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍ ວ່າດ້ວຍການວັດແທກ
# ສະບັບປັບປຸງ

- ອີງຕາມ ມາດຕາ 52 ຂໍ້ 2 ຂອງລັດຖະທຳມະນູນ ແລະ ມາດຕາ 3 ຂໍ້ 1 ຂອງ ກົດໝາຍ ວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ ຂອງສະພາແຫ່ງຊາດ.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ VII ໄດ້ຄົ້ນ ຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍ ວ່າດ້ວຍການວັດແທກ (ສະບັບປັບປຸງ)ໃນວາລະກອງປະຊຸມຕອນບ່າຍ ຂອງວັນທີ 13 ທັນວາ 2013

## ກອງປະຊຸມໄດ້ຕົກລົງ:

**ມາດຕາ 1** ຮັບຮອງເອົາກົດໝາຍ ວ່າດ້ວຍການວັດແທກ (ສະບັບປັບປຸງ) ດ້ວຍ ຄະແນນສຽງເຫັນດີເປັນສ່ວນຫຼາຍ.

**ມາດຕາ 2** ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນະຄອນຫຼວງວຽງຈັນ, ວັນທີ 13 ທັນວາ 2013

**ປະທານສະພາແຫ່ງຊາດ**

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ ເລກທີ 056 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 22 01 2014

# ລັດຖະດຳລັດ
## ຂອງປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍການວັດແທກ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຕົກລົງຂອງສະພາແຫ່ງຊາດ ສະບັບເລກທີ 014 /ສພຊ, ລົງວັນທີ 13 ທັນວາ 2013;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 02 /ຄປຈ, ລົງວັນທີ 23 / 01 / 2014.

## ປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:

**ມາດຕາ 1** ປະກາດໃຊ້ກົດໝາຍ ວ່າດ້ວຍການວັດແທກ (ສະບັບປັບປຸງ).

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ.**

ຈູມມາລີ ໄຊຍະສອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-------------------------

ສະພາແຫ່ງຊາດ ເລກທີ 36 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 13 ທັນວາ 2013

# ກົດໝາຍ

# ວ່າດ້ວຍ ການວັດແທກ (ສະບັບປັບປຸງ)

## ພາກທີ I

## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ, ມາດຕະການ ກ່ຽວກັບ ການຄຸ້ມຄອງ ແລະ ການກວດກາເຄື່ອນໄຫວວຽກງານວັດແທກ ເພື່ອເຮັດໃຫ້ວຽກງານ ດັ່ງກ່າວ ດຳເນີນໄປຢ່າງເປັນ ເອກະພາບ, ຖືກຕ້ອງ, ຊັດເຈນ ແລະ ທັນສະໄໝ, ຮັບປະກັນສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງຜູ້ດຳເນີນທຸລະກິດ ແລະ ຜູ້ຊົມໃຊ້ ແນໃສ່ສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ແກ່ກິດຈະການ ການຜະລິດ, ການ ບໍລິການ, ການແລກປ່ຽນ, ການຊື້ຂາຍ ຮັບປະກັນໃຫ້ປະຊາຊົນມີຄວາມປອດໄພ ແລະ ສັງຄົມມີຄວາມຍຸຕິທຳ ປະກອບສ່ວນເຂົ້າໃນການປົກປັກຮັກສາສິ່ງແວດລ້ອມ ແລະ ພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 (ປັບປຸງ) ການວັດແທກ**

ການວັດແທກ ແມ່ນ ການກຳນົດຄ່າເປັນຕົວເລກ ທີ່ຊີ້ບອກຄຸນລັກສະນະ, ຂະໜາດ, ປະລິມານ ຂອງວັດຖຸສິ່ງຂອງທີ່ຕ້ອງການຄຳນວນ, ຕ້ອງການຮູ້ດ້ວຍການໃຊ້ແມ່ແບບວັດແທກ, ເຄື່ອງມື, ອຸປະກອນວັດແທກທີ່ໄດ້ມາດຕະຖານຕາມທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂອງກົດໝາຍສະບັບນີ້.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຫົວໜ່ວຍວັດແທກສາກົນ** ໝາຍເຖິງ ລະບົບຫົວໜ່ວຍວັດແທກ ຊຶ່ງຖືກຮັບຮອງໂດຍອີງການສາກົນທີ່ກ່ຽວຂ້ອງ;
2. **ອຸປະກອນວັດແທກ** ໝາຍເຖິງ ເຄື່ອງມືທີ່ໃຊ້ ເພື່ອດຳເນີນການວັດແທກ ຊຶ່ງປະ ກອບດ້ວຍເຄື່ອງດຽວ ຫຼື ນຳໃຊ້ກັບອຸປະກອນເສີມອື່ນໆ ເຊັ່ນ: ກະໂຕ້ນຊິງ, ໝໍ້ນັບກະແສໄຟຟ້າ, ໝໍ້ນັບ ນ້ຳປະປາ, ຜາງຊີງ, ໄມ້ເມຍ (ສຳລັບກ້ອງສ່ອງຈັບລະດັບ);
3. **ຕົ້ນແບບເຄື່ອງມື ແລະ ອຸປະກອນວັດແທກ** ໝາຍເຖິງ ເຄື່ອງມື ແລະ ອຸປະກອນວັດແທກ ທີ່ສ້າງຂຶ້ນມາເປັນຕົວຢ່າງ ເພື່ອກວດສອບ ຢັ້ງຢືນຄວາມຖືກຕ້ອງ ກ່ອນການດຳເນີນການຜະລິດ;
4. **ການກວດທຽບ (Traceability)** ໝາຍເຖິງ ການດຳເນີນການກວດຄືນຄ່າອະນຸຍາດ ຜິດດ່ຽງ ຂອງແມ່ແບບວັດແທກໃດໜຶ່ງ ໂດຍສົມທຽບແບບຕໍ່ເນື່ອງກັບແມ່ແບບວັດແທກທີ່ກ່ຽວຂ້ອງ ຊຶ່ງມີ ຄຸນນະພາບ ຫຼື ຄວາມຊັດເຈນສູງກວ່າ ທີ່ສາມາດສ້າງສາຍພົວພັນກັບມາດຕະຖານແຫ່ງຊາດ ຫຼື ມາດຕະຖານສາກົນ;
5. **ການສອບທຽບ (Calibration)** ໝາຍເຖິງ ການດຳເນີນການກວດສອບຄວາມຖືກຕ້ອງຂອງເຄື່ອງມື ແລະ ອຸປະກອນວັດແທກ ດ້ວຍການປຽບທຽບກັບແມ່ແບບວັດແທກທີ່ກ່ຽວຂ້ອງ ຊຶ່ງມີຄຸນນະພາບ ຫຼື ຄວາມຊັດເຈນຕ່ຳກວ່າ;

6. **ການກວດຄືນ (Verification)** ໝາຍເຖິງ ການດຳເນີນການສອບທຽບຄືນ ໃໝ່ຂອງ ເຄື່ອງມື ແລະ ອຸປະກອນວັດແທກ ທີ່ຜະລິດ ແລະ ນຳໃຊ້ ເພື່ອຢັ້ງຢືນ ຄວາມຖືກຕ້ອງ ຕາມແມ່ແບບ ວັດແທກ;

7. **ພາຊະນະບັນຈຸ ໝາຍເຖິງ** ວັດຖຸ ທີ່ໃຊ້ເພື່ອຫຸ້ມຫໍ່ສິ່ງຂອງໃດໜຶ່ງ ເຊັ່ນ: ແກັດ, ກັບ, ກະປ໋ອງ, ກວດແກ້ວ ແລະ ກວດຢາງ;

8. **ສິນຄ້າຫຸ້ມຫໍ່** ໝາຍເຖິງ ຜະລິດຕະພັນທີ່ຖືກຫຸ້ມຫໍ່ດ້ວຍພາຊະນະບັນຈຸໃດໜຶ່ງ ຫຼື ດ້ວຍວິທີໃດໜຶ່ງ ກ່ອນການຂາຍຍົກ ຫຼື ຂາຍຍ່ອຍ;

9. **ປະລິມານສຸດທິ** ໝາຍເຖິງ ນ້ຳໜັກ ຫຼື ບໍລິມາດຕົວຈິງຂອງຜະລິດຕະພັນ ຫຼື ສິນຄ້າກ່ອນນຳເຂົ້າໃສ່ພາຊະນະບັນຈຸ;

10. **ປະລິມານກຳນົດ** ໝາຍເຖິງ ນ້ຳໜັກ ຫຼື ບໍລິມາດ ທີ່ຖືກກຳນົດ ຫຼື ຄາດຄະເນ ຊຶ່ງ ອາດຈະແຕກຕ່າງຈາກປະລິມານສຸດທິ;

11. **ກາໝາຍການກວດຄືນ** ໝາຍເຖິງ ສັນຍາລັກ ທີ່ໃຊ້ກັບ ເຄື່ອງມື, ອຸປະກອນ ວັດແທກ ທີ່ຢັ້ງຢືນເຖິງຄວາມຖືກຕ້ອງຂອງເຄື່ອງມື, ອຸປະກອນວັດແທກທີ່ໄດ້ ກວດຜ່ານແລ້ວ;

12. **ສັນຍາລັກຕາປະທັບໃສ່ອຸປະກອນວັດແທກ** ໝາຍເຖິງ ສັນຍາລັກ ທີ່ປົກປ້ອງອຸປະ ກອນວັດແທກ ເພື່ອບໍ່ໃຫ້ມີການປ່ຽນແປງ, ການດັດແປງ, ການຖອດສ່ວນໃດ ສ່ວນໜຶ່ງ ຫຼື ຫຼາຍສ່ວນອອກ;

13. **ການວັດແທກທາງກົດໝາຍ** ໝາຍເຖິງ ການວັດແທກຕາມຂັ້ນຕອນທີ່ໄດ້ກຳນົດໄວ້ ໃນລະບຽບກົດໝາຍ, ລະບຽບການທາງດ້ານບໍລິຫານ ແລະ ທາງດ້ານເຕັກນິກ;

14. **ອົງການທີ່ມີຄວາມສາມາດພຽງພໍ** ໝາຍເຖິງ ອົງການທີ່ມີຄວາມສາມາດໃນການ ຢັ້ງຢືນ ແລະ ຖືກຮັບຮອງເອົາ ໂດຍອົງການວັດແທກສາກົນ ເປັນຕົ້ນ "ກອງ

ປະຊຸມການຮັບຮອງສາກົນ" (IAF) ແລະ "ອົງການ ຮັບຮອງຫ້ອງທົດລອງ ສາກົນ" (ILAC).

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດກ່ຽວກັບວຽກງານວັດແທກ**

ລັດ ສົ່ງເສີມການນຳໃຊ້ແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນ ວັດແທກ ທີ່ຖືກຕ້ອງຕາມມາດຕະຖານ ແລະ ລະບຽບກົດໝາຍ ເຂົ້າໃນການຮັບໃຊ້ການຜະລິດ ທຸລະກິດ, ການບໍລິການ, ການແລກປ່ຽນ, ການຊື້ຂາຍ, ການຊົມໃຊ້ປະຈຳວັນຂອງ ສັງຄົມ ເພື່ອຮັບປະກັນຄວາມປອດໄພ ແລະ ຍຸຕິທຳ.

ລັດ ເອົາໃຈໃສ່ ສະໜອງງົບປະມານ, ປະກອບບຸກຄະລາກອນ, ພາຫະນະ, ເຄື່ອງມື ແລະ ອຸປະກອນ, ກໍ່ສ້າງພື້ນຖານທາງດ້ານວັດຖຸເຕັກນິກຢ່າງເໝາະສົມ ຫ້ອງ ທົດລອງ, ແມ່ແບບວັດແທກ, ສູນຝຶກອົບຮົມ ເພື່ອຮັບປະກັນການຄຸ້ມຄອງ ແລະ ກວດກາວຽກງານວັດແທກ ໃຫ້ມີປະສິດທິຜົນສູງ.

ລັດ ຊຸກຍູ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ລົງທຶນເຂົ້າໃສ່ ວຽກງານວັດແທກ, ມີສ່ວນຮ່ວມໃນການເຄື່ອນໄຫວ, ກວດກາ ແລະ ພັດທະນາວຽກງານວັດແທກໃຫ້ ທັນສະໄໝ.

**ມາດຕາ 5 (ປັບປຸງ) ຫຼັກການພື້ນຖານກ່ຽວກັບວຽກງານວັດແທກ**

ການເຄື່ອນໄຫວວຽກງານວັດແທກ ໃຫ້ປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ລັດ ຄຸ້ມຄອງວຽກງານວັດແທກຢ່າງລວມສູນເປັນເອກະພາບໃນຂອບເຂດທົ່ວ ປະເທດ ໂດຍໃຫ້ຂະແໜງການທີ່ກ່ຽວຂ້ອງເຮັດໜ້າທີ່ຄຸ້ມຄອງຕົວຈິງ;
2. ວຽກງານວັດແທກ ຕ້ອງຮັບປະກັນຄວາມຖືກຕ້ອງ, ປອດໄພ, ໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້;
3. ແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນວັດແທກທີ່ນຳໃຊ້ໃນ ສປປ ລາວ ຕ້ອງຮັບປະກັນມາດຕະຖານ ແລະ ຖືກຕ້ອງຕາມລະບຽບກົດໝາຍຂອງ ສປປ ລາວ;

4. ລະບົບການວັດແທກຂອງ ສປປ ລາວ ຕ້ອງສອດຄ່ອງກັບສະພາບຄວາມເປັນຈິງ, ສົນທິສັນຍາ ສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 6 (ປັບປຸງ) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບການເຄື່ອນໄຫວໃນຂົງເຂດການວັດແທກ ຂອງ ບຸກຄົນ, ນິຕິ ບຸກຄົນ ແລະ ການຈັດຕັ້ງ ໃນຂອບເຂດທົ່ວປະເທດ ເວັ້ນເສັຍແຕ່ການແລກປ່ຽນ ແລະ ການຊື້ຂາຍ ຕາມແບບດັ້ງເດີມ ເປັນຕົ້ນ ເປັນກອງ, ເປັນມັດ, ເປັນຖົງ, ເປັນຫົ່ ແລະ ເປັນກະຕ່າ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ເປີດກວ້າງການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານ ວັດແທກ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ສ້າງ ແລະ ຍົກລະດັບຄວາມຮູ້, ຄວາມສາ ມາດຂອງບຸກຄະລາກອນ, ຍາດແຍ່ງການຊ່ວຍເຫຼືອ ແລະ ອື່ນໆ ບົນພື້ນຖານຫຼັກການຄວາມເປັນເອກະ ລາດ, ເປັນເຈົ້າຕົນເອງ, ສະເໝີພາບ ແລະ ຕ່າງຝ່າຍຕ່າງມີຜົນປະໂຫຍດ ແລະ ປະຕິບັດຕາມສັນຍາສາ ກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ວຽກງານວັດແທກ

**ມາດຕາ 8 (ປັບປຸງ) ວຽກງານວັດແທກ**

ວຽກງານວັດແທກ ແມ່ນ ບັນດາກິດຈະການກ່ຽວກັບການວັດແທກ ເປັນຕົ້ນ ການສອບທຽບ, ການກວດທຽບ ແລະ ການກວດຄືນ ແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນວັດແທກ, ການຢັ້ງຢືນ, ການຮັບຮອງ, ຜະລິດຕະພັນຫຸ້ມຫໍ່ ແລະ ປະລິມານສຸດທິ.

ວຽກງານວັດແທກ ແມ່ນ ວຽກງານທີ່ຈຳເປັນ ເພື່ອຮັບປະກັນຄວາມເປັນເອກະພາບ ດ້ານການວັດແທກ ແນໃສ່ປັບປຸງຄຸນນະພາບຂອງຜະລິດຕະພັນ ແລະ ການບໍລິການ ປະກອບສ່ວນເຂົ້າໃນການ ສົ່ງເສີມການຄ້າພາຍໃນ ແລະ ຕ່າງປະເທດ.

**ມາດຕາ 9 (ໃໝ່) ພາຫະນະວັດແທກ**

ພາຫະນະວັດແທກ ມີ ດັ່ງນີ້:

1. ຫົວໜ່ວຍວັດແທກ;
2. ແມ່ແບບວັດແທກ;
3. ເຄື່ອງມື ແລະ ອຸປະກອນວັດແທກ;
4. ສິນຄ້າຫຸ້ມຫໍ່.

ນອກຈາກນີ້ ອາດຈະຍັງມີພາຫະນະວັດແທກອື່ນອີກ.

## ໝວດທີ 1
## ຫົວໜ່ວຍວັດແທກ

**ມາດຕາ 10 ຫົວໜ່ວຍວັດແທກ**

ຫົວໜ່ວຍວັດແທກ ທີ່ນຳໃຊ້ ຢູ່ ສປປ ລາວ ປະກອບດ້ວຍ ຫົວໜ່ວຍວັດແທກພື້ນຖານ ແລະ ຫົວໜ່ວຍວັດແທກຍ່ອຍ.

ຫົວໜ່ວຍວັດແທກພື້ນຖານ ມີດັ່ງດຽວກັນກັບຫົວໜ່ວຍວັດແທກຂອງລະບົບເມຕຼິກ ຫຼື ລະບົບ ສາກົນ (SI) ຊຶ່ງປະກອບດ້ວຍ:

1. ແມັດ (m) ແມ່ນ ຫົວໜ່ວຍວັດແທກພື້ນຖານ ຂອງຄວາມຍາວ;
2. ກິໂລກຼາມ (kg) ແມ່ນ ຫົວໜ່ວຍວັດແທກພື້ນຖານ ຂອງນ້ຳໜັກ;
3. ວິນາທີ (s) ແມ່ນ ຫົວໜ່ວຍວັດແທກພື້ນຖານ ຂອງເວລາ;

4. ອຳແປ (A) ແມ່ນ ຫົວໜ່ວຍວັດແທກພື້ນຖານ ຂອງກະແສໄຟຟ້າ;

5. ແກນວິນ (K) ແມ່ນ ຫົວໜ່ວຍວັດແທກພື້ນຖານ ຂອງອຸນຫະພູມ;

6. ໂມນ (mol) ແມ່ນ ຫົວໜ່ວຍວັດແທກພື້ນຖານ ຂອງປະລິມານສານເຄມີ;

7. ກັງເດີລາ (Cd) ແມ່ນ ຫົວໜ່ວຍວັດແທກພື້ນຖານຂອງແສງ.

ສຳລັບ ຫົວໜ່ວຍວັດແທກຍ່ອຍ ໄດ້ມີເອກະສານຊ້ອນທ້າຍຂອງກົດໝາຍສະບັບນີ້.

**ມາດຕາ 11 ການນຳໃຊ້ຫົວໜ່ວຍວັດແທກ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ນຳໃຊ້ຫົວໜ່ວຍວັດແທກ ເຂົ້າໃນການເຄື່ອນໄຫວວຽກງານວັດແທກ ຢູ່ ສປປ ລາວ ຕ້ອງປະຕິບັດຕາມຫົວໜ່ວຍວັດແທກ ທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂອງກົດໝາຍສະບັບນີ້.

ສຳລັບ ສິນຄ້າເພື່ອການສົ່ງອອກ ໃຫ້ນຳໃຊ້ຫົວໜ່ວຍວັດແທກທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງຂອງມາດຕານີ້ ເວັ້ນເສຍແຕ່ ຄູ່ສັນຍາຫາກໄດ້ຕົກລົງກັນໄວ້ຢ່າງອື່ນ.

## ໝວດທີ 2
## ແມ່ແບບວັດແທກ

**ມາດຕາ 12 (ປັບປຸງ) ແມ່ແບບວັດແທກ**

ແມ່ແບບວັດແທກ ທີ່ນຳໃຊ້ໃນ ສປປ ລາວ ມີ ສາມຂັ້ນ ດັ່ງນີ້:

1. ແມ່ແບບວັດແທກຂັ້ນໜຶ່ງ ແມ່ນ ແມ່ແບບວັດແທກທີ່ມີມາດຕະຖານຄວາມຊັດເຈນ ສູງສຸດ ຊຶ່ງມີຢູ່ສະຖານທີ່ ຫຼື ການຈັດຕັ້ງໃດໜຶ່ງ ທີ່ດຳເນີນການວັດແທກໂດຍສອດຄ່ອງກັບລະບຽບການຂອງສາກົນ;

2. ແມ່ແບບວັດແທກຂັ້ນສອງ ແມ່ນ ແມ່ແບບວັດແທກທີ່ຖືກກຳນົດ ໂດຍຜ່ານການສອບທຽບຄວາມຊັດເຈນ ກັບແມ່ແບບວັດແທກຂັ້ນໜຶ່ງໃນປະລິມານດຽວກັນ. ການສອບທຽບ ສາມາດດຳເນີນໂດຍກົງລະຫວ່າງ ແມ່ແບບວັດແທກຂັ້ນໜຶ່ງ ແລະ ແມ່ແບບວັດແທກຂັ້ນສອງ ຫຼື ອາດຈະມີລະບົບການວັດແທກອື່ນປະກອບຢູ່ນຳ. ແມ່ແບບວັດແທກຂັ້ນສອງ ມີຄ່າຄວາມຊັດເຈນຕ່ຳກວ່າແມ່ແບບວັດແທກ ຂັ້ນໜຶ່ງ;

3. ແມ່ແບບວັດແທກຂັ້ນປະຕິບັດງານ ແມ່ນ ແມ່ແບບວັດແທກທີ່ນຳໃຊ້ເປັນປະຈຳເພື່ອສອບທຽບ ເຄື່ອງມື ແລະ ອຸປະກອນວັດແທກ ທີ່ນຳໃຊ້ທົ່ວໄປ ຊຶ່ງມີຄ່າຄວາມຊັດເຈນ ຕ່ຳກວ່າແມ່ ແບບວັດແທກຂັ້ນສອງ.

ຂັ້ນຕອນ ແລະ ວິທີການຮັບຮອງເອົາແມ່ແບບວັດແທກແຕ່ລະຂັ້ນ ໄດ້ກຳນົດໄວ້ໃນລະບຽບການ ຕ່າງຫາກ.

## ມາດຕາ 13 ການຜະລິດແມ່ແບບວັດແທກ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຕ້ອງການດຳເນີນທຸລະກິດ ການຜະລິດແມ່ແບບວັດແທກ ຕ້ອງປະຕິບັດຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 32 ແລະ ມາດຕາ 33 ຂອງກົດໝາຍສະບັບນີ້.

## ມາດຕາ 14 ການນຳໃຊ້ແມ່ແບບວັດແທກ

ແມ່ແບບວັດແທກແຕ່ລະຂັ້ນ ຖືກນຳໃຊ້ຕາມກໍລະນີ ດັ່ງນີ້:

1. ແມ່ແບບວັດແທກຂັ້ນໜຶ່ງ ນຳໃຊ້ເພື່ອສອບທຽບແມ່ແບບວັດແທກຂັ້ນສອງ;

2. ແມ່ແບບວັດແທກຂັ້ນສອງ ນຳໃຊ້ເພື່ອສອບທຽບແມ່ແບບວັດແທກຂັ້ນປະຕິບັດງານ;

3. ແມ່ແບບວັດແທກຂັ້ນປະຕິບັດງານ ນຳໃຊ້ເພື່ອສອບທຽບເຄື່ອງມື ແລະ ອຸປະກອນວັດແທກທີ່ນຳໃຊ້ທົ່ວໄປ.

**ມາດຕາ 15 (ປັບປຸງ) ການກວດທຽບ ແມ່ແບບວັດແທກ**

ການກວດທຽບແມ່ແບບວັດແທກ ແມ່ນ ການດຳເນີນການກວດສອບຄຸນລັກສະນະຂອງຜົນການວັດແທກ ຊຶ່ງພົວພັນກັບສິ່ງອ້າງອີງ ທີ່ມີເອກະສານປະກອບການບັນທຶກແບບເປັນຕ່ອງໂສ້ຕໍ່ເນື່ອງ ແລະ ຜົນໄດ້ຮັບນັ້ນ ກໍເປັນສາເຫດຂອງຄວາມບໍ່ແນ່ນອນຂອງການວັດແທກ.

ການກວດທຽບແມ່ແບບວັດແທກແຕ່ລະຂັ້ນ ຕ້ອງດຳເນີນຜ່ານຫ້ອງທົດລອງທີ່ໄດ້ມາດຕະຖານ ເພື່ອຮັບປະກັນການກວດທຽບກັບລະບົບເມຕຼິກ ຫຼື ລະບົບສາກົນ (SI) ໂດຍອີງຕາມຂໍ້ມູນການນຳໃຊ້, ການຜະລິດ ແລະ ປັດໃຈດ້ານເຕັກນິກອື່ນ.

ແມ່ແບບວັດແທກ ທີ່ນຳໃຊ້ໃນ ສປປ ລາວ ຕ້ອງໄດ້ຮັບການກວດທຽບ ເປັນປະຈຳຕາມແຕ່ລະໄລຍະ ໂດຍຂຶ້ນກັບຄຸນລັກສະນະ ແລະ ແມ່ແບບວັດແທກແຕ່ລະຂັ້ນ ເພື່ອຮັບປະກັນໃຫ້ຖືກຕ້ອງ ກັບລະບົບເມຕຼິກ ຫຼື ລະບົບສາກົນ (SI).

**ມາດຕາ 16 ການເກັບຮັກສາແມ່ແບບວັດແທກ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດເກັບຮັກສາແມ່ແບບວັດແທກຂັ້ນໜຶ່ງ, ຂັ້ນສອງ ແລະ ຂັ້ນປະຕິບັດງານ ຕາມຄວາມຕ້ອງການຂອງວຽກງານເຄື່ອນໄຫວການວັດແທກຂອງຕົນ.

ສຳລັບ ການເກັບຮັກສາແມ່ແບບວັດແທກຂັ້ນໜຶ່ງນັ້ນ ຕ້ອງແຈ້ງໃຫ້ອົງການຄຸ້ມຄອງວຽກງານວັດແທກ ເພື່ອນຳໃຊ້ເປັນຖານຂໍ້ມູນ.

**ມາດຕາ 17 ການສ້ອມແປງ, ການປ່ຽນ ຫຼື ການລຶບລ້າງ ແມ່ແບບວັດແທກ**

ແມ່ແບບວັດແທກ ຈະຖືກສ້ອມແປງ, ປ່ຽນ ຫຼື ລຶບລ້າງ ຕາມແຕ່ລະກໍລະນີ ດັ່ງນີ້:

1. ແມ່ແບບວັດແທກ ທີ່ມີຄ່າບໍ່ຖືກຕ້ອງຕາມລະບຽບການທີ່ໄດ້ກຳນົດໄວ້;
2. ແມ່ແບບວັດແທກທີ່ເກັບຮັກສາບໍ່ຖືກຕ້ອງຕາມມາດຕະຖານວັດແທກສາກົນ;

3. ແມ່ແບບວັດແທກ ທີ່ບໍ່ສອດຄ່ອງກັບມາດຕະຖານເຕັກນິກລະອຽດທີ່ໄດ້ກຳນົດໄວ້.

ແມ່ແບບວັດແທກ ທີ່ຈະຖືກສ້ອມແປງ, ປ່ຽນ ຫຼື ລຶບລ້າງໄດ້ ກໍຕໍ່ເມື່ອໄດ້ຮັບການຢັ້ງຢືນ ຈາກຫ້ອງທົດລອງທີ່ກ່ຽວຂ້ອງ.

## ໝວດທີ 3
## ເຄື່ອງມື ແລະ ອຸປະກອນ ວັດແທກ

### ມາດຕາ 18 (ປັບປຸງ) ການຜະລິດເຄື່ອງມື ແລະ ອຸປະກອນວັດແທກ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຜະລິດເຄື່ອງມື ແລະ ອຸປະກອນວັດແທກ ຕ້ອງປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 32 ແລະ ມາດຕາ 33 ຂອງກົດໝາຍສະບັບນີ້.

### ມາດຕາ 19 (ປັບປຸງ) ການນຳເຂົ້າ ເຄື່ອງມື ແລະ ອຸປະກອນວັດແທກ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຕ້ອງການເຮັດທຸລະກິດນຳເຂົ້າເຄື່ອງມື ແລະ ອຸປະກອນວັດແທກທຸກປະເພດ ຕ້ອງສະໜອງເອກະສານຮັບຮອງຈາກປະເທດທີ່ສົ່ງອອກ ແລະ ໃຫ້ປະຕິບັດຕາມລະບຽບກົດໝາຍຂອງ ສປປ ລາວ.

### ມາດຕາ 20 (ປັບປຸງ) ການນຳໃຊ້ເຄື່ອງມື ແລະ ອຸປະກອນວັດແທກ

ເຄື່ອງມື ແລະ ອຸປະກອນວັດແທກ ທີ່ນຳໃຊ້ເຂົ້າໃນການບໍລິການ ຕ້ອງໃຫ້ສອດຄ່ອງກັບຫົວໜ່ວຍວັດແທກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂອງກົດໝາຍສະບັບນີ້ ແລະ ຕ້ອງມີຕົວເລກ ຫຼື ຕົວໜັງສືຢ່າງຈະແຈ້ງ ຊຶ່ງບໍ່ສາມາດປ່ຽນແປງ ຫຼື ລຶບອອກໄດ້.

ໃນກໍລະນີເຄື່ອງມື ແລະ ອຸປະກອນວັດແທກ ມີຂະໜາດນ້ອຍຈົນບໍ່ສາມາດກຳນົດຕົວເລກ ຫຼື ຕົວໜັງສືໃສ່ໄດ້ນັ້ນ ຕ້ອງກຳນົດຕົວເລກ ຫຼື ຕົວໜັງສື ໃສ່ເອກະສານທີ່ແນບຕິດມານຳເຄື່ອງມື ແລະ ອຸປະກອນວັດແທກນັ້ນ.

ເຄື່ອງມື ແລະ ອຸປະກອນວັດແທກ ທຸກປະເພດທີ່ນຳໃຊ້ເຂົ້າໃນທຸລະກິດການບໍລິການ ຕ້ອງ ໄດ້ຮັບການຢັ້ງຢືນຄວາມຖືກຕ້ອງຈາກອົງການຂອງລັດທີ່ກ່ຽວຂ້ອງ. ຂະແໜງການທີ່ນຳໃຊ້ເຄື່ອງມື ແລະ ອຸປະກອນວັດແທກ ເຂົ້າໃນການບໍລິການວຽກງານຂອງຕົນ ທີ່ພົວພັນເຖິງສຸຂະພາບ, ສິ່ງແວດລ້ອມ ແລະ ຊັບສິນຂອງຜູ້ຊົມໃຊ້ນັ້ນ ຕ້ອງປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 23 ແລະ ມາດຕາ 24 ຂອງກົດໝາຍສະບັບນີ້.

**ມາດຕາ 21 (ປັບປຸງ) ການຈົດທະບຽນເຄື່ອງມື ແລະ ອຸປະກອນ ວັດແທກ**

ເຄື່ອງມື ແລະ ອຸປະກອນວັດແທກ ທີ່ມີລັກສະນະເປັນອັນຕະລາຍຕໍ່ຄວາມປອດໄພຂອງຊີວິດ, ສຸຂະພາບຂອງຄົນ, ພືດ, ສັດ ແລະ ສິ່ງແວດລ້ອມ ກ່ອນຈະນຳໃຊ້ເຂົ້າໃນການບໍລິການນັ້ນ ຕ້ອງໄດ້ຈົດທະບຽນນຳຂະແໜງການວິທະຍາສາດ ແລະ ເຕັກໂນໂລຊີ.

ລາຍການເຄື່ອງມື ແລະ ອຸປະກອນ ວັດແທກ ທີ່ເປັນອັນຕະລາຍ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 22 (ປັບປຸງ) ການບໍລິການສ້ອມແປງເຄື່ອງມື ແລະ ອຸປະກອນ ວັດແທກ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີສິດບໍລິການສ້ອມແປງເຄື່ອງມື ແລະ ອຸປະກອນ ວັດແທກທຸກປະເພດ ແລະ ຕ້ອງມີຄວາມຮັບຜິດຊອບໃນການຮັບປະກັນໃຫ້ເຄື່ອງມື ແລະ ອຸປະກອນວັດແທກ ໄດ້ຮັບການສອບທຽບພາຍຫຼັງການບໍລິການສ້ອມແປງແລ້ວ.

**ມາດຕາ 23 (ປັບປຸງ) ການກວດຄືນ**

ເຄື່ອງມື ແລະ ອຸປະກອນວັດແທກ ທີ່ຕ້ອງໄດ້ຮັບການກວດຄືນ ໂດຍອົງການທີ່ມີຄວາມສາມາດພຽງພໍ ກ່ອນຖືກນຳໄປໃຊ້ເຂົ້າໃນການບໍລິການມີດັ່ງນີ້:

1. ເຄື່ອງມື ແລະ ອຸປະກອນວັດແທກໃໝ່;
2. ເຄື່ອງມື ແລະ ອຸປະກອນວັດແທກທີ່ໃຊ້ງານຢູ່;

3. ເຄື່ອງມື ແລະ ອຸປະກອນວັດແທກ ທີ່ໄດ້ຜ່ານການດັດແກ້ ແລະ ສ້ອມແປງຄືນໃໝ່.

ຍະເວລາຂອງການກວດຄືນ ເຄື່ອງມື ແລະ ອຸປະກອນວັດແທກໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 24 (ປັບປຸງ) ການສອບທຽບ**

ການສອບທຽບ ແມ່ນ ການດຳເນີນການກວດສອບຄຸນລັກສະນະຂອງຜົນການວັດແທກ ຊຶ່ງພົວພັນກັບສິ່ງອ້າງອີງທີ່ມີເອກະສານປະກອບການບັນທຶກແບບເປັນຕ່ອງໂສ້ຕໍ່ເນື່ອງ ແລະ ຜົນໄດ້ຮັບນັ້ນກໍເປັນສາເຫດຂອງຄວາມບໍ່ແນ່ນອນຂອງການວັດແທກ.

ການສອບທຽບເຄື່ອງມື ແລະ ອຸປະກອນວັດແທກຕ້ອງດຳເນີນຜ່ານຫ້ອງທົດລອງທີ່ໄດ້ມາດ ຕະຖານ ເພື່ອຮັບປະກັນການກວດທຽບກັບລະບົບເມຕຼິກ ຫຼື ລະບົບສາກົນ (SI) ໂດຍອີງຕາມຂໍ້ມູນ ການນຳໃຊ້, ການຜະລິດ ແລະ ປັດໃຈດ້ານເຕັກນິກອື່ນ.

ເຄື່ອງມື ແລະ ອຸປະກອນວັດແທກທີ່ນຳໃຊ້ໃນ ສປປ ລາວ ຕ້ອງໄດ້ຮັບການກວດທຽບເປັນປະຈຳຕາມແຕ່ລະໄລຍະໂດຍຂຶ້ນກັບຄຸນລັກສະນະຂອງເຄື່ອງມື ແລະ ອຸປະກອນ ວັດແທກ ເພື່ອຮັບປະກັນໃຫ້ຖືກຕ້ອງກັບລະບົບເມຕຼິກ ຫຼື ລະບົບສາກົນ (SI).

ໄລຍະເວລາຂອງການສອບທຽບເຄື່ອງມື ແລະ ອຸປະກອນວັດແທກໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 25 (ປັບປຸງ) ການຢັ້ງຢືນ**

ເຄື່ອງມື ແລະ ອຸປະກອນວັດແທກທຸກປະເພດ ຕ້ອງໄດ້ຮັບການຢັ້ງຢືນຄວາມຖືກຕ້ອງໂດຍອົງການທີ່ຖືກຮັບຮອງຈາກອົງການທີ່ກ່ຽວຂ້ອງຂອງລັດເມື່ອໄດ້ປະຕິບັດຕາມມາດຕາ 21, 22, 23 ແລະ 24 ຂອງກົດໝາຍສະບັບນີ້.

ການຢັ້ງຢືນຄວາມຖືກຕ້ອງຂອງເຄື່ອງມື ແລະ ອຸປະກອນວັດແທກແບ່ງອອກເປັນປະເພດດັ່ງນີ້:

1. ໃບຢັ້ງຢືນ;
2. ກາໝາຍ;
3. ສະຕິກເກີ;
4. ອຸປະກອນລ໋ອກ.

ການຢັ້ງຢືນ ອາດນຳໃຊ້ໜຶ່ງ ຫຼື ຫຼາຍປະເພດພ້ອມກັນກໍໄດ້ ໂດຍຂຶ້ນກັບຈຸດພິເສດຂອງເຄື່ອງມື ແລະ ອຸປະກອນ ວັດແທກນັ້ນ.

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເປັນຜູ້ປະກາດໃຊ້, ປ່ຽນປະເພດການຢັ້ງຢືນ ແລະ ຕ້ອງເຜີຍແຜ່ຜ່ານສື່ມວນຊົນ.

**ມາດຕາ 26 (ປັບປຸງ) ການຍົກເລີກການຢັ້ງຢືນ**

ອົງການທີ່ມີຄວາມສາມາດພຽງພໍ ຫຼື ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເປັນຜູ້ຍົກເລີກການຢັ້ງຢືນ ເຄື່ອງມື ແລະ ອຸປະກອນ ວັດແທກ ຕາມແຕ່ລະກໍລະນີ ເມື່ອເຫັນວ່າເຄື່ອງມື ແລະ ອຸປະກອນ ວັດແທກນັ້ນ ບໍ່ຖືກຕ້ອງຕາມມາດຕະຖານ, ໝົດອາຍຸການນຳໃຊ້ ແລະ ເປ່ເພ.

**ມາດຕາ 27 (ໃໝ່) ກິດຈະການວຽກງານວັດແທກ**

ວຽກງານວັດແທກ ປະກອບດ້ວຍກິດຈະການຕົ້ນຕໍ ດັ່ງນີ້:

1. ການບັນທຶກການເຄື່ອນໄຫວວຽກງານວັດແທກ ແລະ ການແລກປ່ຽນບົດບັນທຶກດັ່ງກ່າວລະຫວ່າງອົງການລັດດ້ວຍກັນ ຫຼື ພາກສ່ວນອື່ນທີ່ກ່ຽວຂ້ອງ;
2. ການອອກໃບຢັ້ງຢືນຜົນຂອງການວັດແທກ;

3. ການແລກປ່ຽນຜົນການກວດທຽບຂອງການວັດແທກ ລະຫວ່າງອົງການລັດດ້ວຍກັນ ຫຼື ພາກສ່ວນອື່ນທີ່ກ່ຽວຂ້ອງ.

**ມາດຕາ 28 (ໃໝ່) ລະບຽບການນຳໃຊ້ເຄື່ອງມື ແລະ ອຸປະກອນ ວັດແທກ**

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ກຳນົດລະບຽບການນຳໃຊ້ເຄື່ອງມື ແລະ ອຸປະກອນວັດແທກເພື່ອປົກປ້ອງສຸຂະພາບ, ຄວາມປອດໄພຂອງປະຊາຊົນ, ສິ່ງແວດລ້ອມ, ຊັບສິນຂອງຜູ້ຊົມໃຊ້ ແລະ ໃຫ້ສອດຄ່ອງກັບລະບຽບກົດໝາຍພາຍໃນ ແລະ ສາກົນດັ່ງນີ້:

1. ລາຍການເຄື່ອງມື ແລະ ອຸປະກອນວັດແທກຕ້ອງຢູ່ພາຍໃຕ້ການຄວບຄຸມ,ຕິດຕາມ ແລະ ກວດກາ ຂອງອົງການຄຸ້ມຄອງວຽກງານວັດແທກ;

2. ການປະຕິບັດງານດ້ານການວັດແທກ ແລະ ເງື່ອນໄຂດ້ານເຕັກນິກທີ່ຈຳເປັນຊຶ່ງໃຊ້ໄດ້ກັບເຄື່ອງມື ແລະ ອຸປະກອນວັດແທກ ຕ້ອງສອດຄ່ອງກັບສັນຍາສາກົນ ແລະ ສົນທິສັນຍາທີ່ ສປປ ລາວ ເປັນພາຄີ;

3. ການຄວບຄຸມ, ຕິດຕາມ ແລະ ກວດກາເຄື່ອງມື ແລະ ອຸປະກອນດັ່ງກ່າວຕ້ອງຮັບປະກັນໃຫ້ຖືກຕ້ອງຕາມເປົ້າໝາຍການນຳໃຊ້, ລະບຽບການທີ່ຈຳເປັນຂອງການວັດແທກ ແລະ ມີການ ປົກປ້ອງເພື່ອບໍ່ໃຫ້ນຳໃຊ້ໃນທາງທີ່ບໍ່ຖືກຕ້ອງ ແລະ ມີການສໍ້ໂກງ;

4. ເຄື່ອງມື ແລະ ອຸປະກອນວັດແທກ ທີ່ບໍ່ໄດ້ຕາມລະບຽບການຄວບຄຸມ ຕ້ອງດັດແກ້ໃຫ້ຖືກຕ້ອງ ຫຼື ເກັບຄືນຈາກທ້ອງຕະຫຼາດ ຫຼື ເອົາອອກຈາກການນຳໃຊ້ຕາມແຕ່ລະກໍລະນີ;

5. ການເຂົ້າເຖິງບາງສ່ວນ ຫຼື ການດຳເນີນງານຂອງເຄື່ອງມື ແລະ ອຸປະກອນວັດແທກເປັນຕົ້ນ ຊອບແວ ຕ້ອງໄດ້ຮັບການປ້ອງກັນດ້ວຍການຕິດກາໝາຍສະເພາະເພື່ອຫຼີກເວັ້ນການດັດແກ້;

6. ລະບຽບການນຳໃຊ້ເຄື່ອງມື ແລະ ອຸປະກອນວັດແທກ ຕ້ອງສອດຄ່ອງກັບລະບຽບການຂອງສາກົນ.

## ໝວດທີ 4
## ສິນຄ້າຫຸ້ມຫໍ່

### ມາດຕາ 29 (ປັບປຸງ) ສິນຄ້າຫຸ້ມຫໍ່

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນທຸລະກິດ ກ່ຽວກັບສິນຄ້າຫຸ້ມຫໍ່ຢູ່ ສປປ ລາວ ຕ້ອງມີສະຫຼາກທີ່ສອດຄ່ອງກັບກົດໝາຍວ່າ ດ້ວຍການປົກປ້ອງຜູ້ຊົມໃຊ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ, ນອກຈາກນັ້ນ ຍັງຕ້ອງກຳນົດຄ່າປະລິມານສຸດທິໃຫ້ສອດຄ່ອງກັບຫົວໜ່ວຍວັດແທກ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

### ມາດຕາ 30 ການກຳນົດຄ່າປະລິມານສຸດທິຂອງສິນຄ້າຫຸ້ມຫໍ່

ສິນຄ້າຫຸ້ມຫໍ່ ໃຫ້ກຳນົດຄ່າປະລິມານສຸດທິຕາມກໍລະນີ ດັ່ງນີ້:

1. ຖ້າຫາກເປັນຂະໜາດ ໃຫ້ກຳນົດເປັນຄວາມຍາວ (ແມັດ);
2. ຖ້າຫາກເປັນ ຕ່ອນ, ກ້ອນ, ຂອງແຂງ, ເຄິ່ງແຂງ ຫຼື ສິ່ງດັ່ງກ່າວປະສົມກັບຂອງແຫຼວ ໃຫ້ກຳນົດເປັນນ້ຳໜັກ (ກິໂລກຣາມ);
3. ຖ້າຫາກເປັນຂອງແຫຼວ ຫຼື ເປັນອາຍໃຫ້ກຳນົດເປັນ ບໍລິມາດ (ລິດ, ແມັດກ້ອນ).

### ມາດຕາ 31 (ໃໝ່) ເງື່ອນໄຂສຳລັບສິນຄ້າຫຸ້ມຫໍ່

ເງື່ອນໄຂສຳລັບສິນຄ້າຫຸ້ມຫໍ່ທີ່ວາງ ຈຳໜ່າຍຕາມທ້ອງຕະຫຼາດ ມີດັ່ງນີ້:

1. ສິນຄ້າຫຸ້ມຫໍ່ ຕ້ອງຕິດສະຫຼາກ, ບົ່ງບອກຂະໜາດສິນຄ້າທີ່ຖືກຫຸ້ມຫໍ່ ແລະ ຫົວໜ່ວຍຕາມການກຳນົດຂອງກົດໝາຍ, ສະຫຼາກຕ້ອງບົ່ງບອກຊື່ ແລະ ທີ່ຢູ່ຂອງໂຮງງານ, ຜູ້ຜະລິດ ຫຼື ຜູ້ນຳເຂົ້າ;

2. ປະລິມານສຸດທິຂອງສິນຄ້າທີ່ຖືກຫຸ້ມຫໍ່ ຕ້ອງໄດ້ຮັບການກວດຄືນເຊັ່ນ ແຜນການເອົາຕົວຢ່າງ, ຂັ້ນຕອນການທົດສອບ, ວິທີການນໍາໃຊ້ສະຖິຕິ, ບົດແນະນໍາທີ່ເໝາະສົມ ແລະ ເອກະສານອື່ນສໍາລັບອົງການທີ່ກ່ຽວຂ້ອງຂອງລັດ ແລະ ຜູ້ຫຸ້ມຫໍ່;

3. ສິນຄ້າຫຸ້ມຫໍ່ທີ່ນໍາເຂົ້າ ຕ້ອງຕິດກາໝາຍຄວາມສອດຄ່ອງກັບລະບຽບການວັດແທກຂອງຕ່າງປະເທດ ຫຼື ຕາມລະບົບກາໝາຍຄວາມສອດຄ່ອງທີ່ອົງການຈັດຕັ້ງພາກພື້ນ ແລະ ສາກົນໄດ້ກໍານົດໄວ້.

# ພາກທີ III
# ສິດ ແລະ ພັນທະຂອງຜູ້ຜະລິດ, ຜູ້ຂາຍ ແລະ ຜູ້ບໍລິການ

## ມາດຕາ 32 ສິດຂອງຜູ້ຜະລິດ, ຜູ້ຂາຍ ແລະ ຜູ້ບໍລິການ ແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນ ວັດແທກ

ຜູ້ຜະລິດ, ຜູ້ຂາຍ ແລະ ຜູ້ບໍລິການ ແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນວັດແທກມີສິດດັ່ງນີ້:

1. ເລືອກຜູ້ໃຫ້ບໍລິການດ້ານການກວດຄືນ, ກວດທຽບ, ສອບທຽບ ແລະ ທົດສອບ ເພື່ອຄວບຄຸມ ແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນວັດແທກ;
2. ສະເໜີຜູ້ໃຫ້ບໍລິການດ້ານການກວດຄືນ, ກວດທຽບ, ສອບທຽບ ແລະ ທົດສອບ ກ່ຽວກັບຜົນຂອງການບໍລິການ;
3. ສະເໜີຕໍ່ອົງການຈັດຕັ້ງລັດ ກ່ຽວກັບການດໍາເນີນດ້ານບໍລິຫານ ແລະ ການຕັດສິນໃຈ ດ້ານບໍລິຫານຕາມລະບຽບກົດໝາຍ;
4. ປະຕິບັດສິດອື່ນຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

**ມາດຕາ 33 (ປັບປຸງ) ພັນທະຂອງຜູ້ຜະລິດ, ຜູ້ຂາຍ ແລະ ຜູ້ບໍລິການ ແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນວັດແທກ**

ຜູ້ຜະລິດ, ຜູ້ຂາຍ ແລະ ຜູ້ບໍລິການແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນວັດແທກມີພັນທະດັ່ງນີ້:

1. ປະຕິບັດຕາມຂັ້ນຕອນການຄວບຄຸມແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນວັດແທກຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້;
2. ໃຫ້ການຮ່ວມມືແກ່ເຈົ້າໜ້າທີ່ທີ່ກ່ຽວຂ້ອງຂອງລັດໃນເວລາປະຕິບັດໜ້າທີ່ກວດກາ ແລະ ກວດສອບຕາມລະບຽບກົດໝາຍ;
3. ສະໜອງຂໍ້ມູນທີ່ຖືກຕ້ອງ ກ່ຽວກັບລາຍລະອຽດເຕັກນິກການວັດແທກຂອງແມ່ແບບ ວັດແທກ, ເຄື່ອງມື ແລະ ອຸປະກອນວັດແທກ;
4. ໃຫ້ຄຳແນະນຳທີ່ຖືກຕ້ອງແກ່ລູກຄ້າ ແລະ ຜູ້ຊົມໃຊ້ກ່ຽວກັບວິທີການໃນການຂົນສົ່ງ, ເກັບມ້ຽນ, ບຳລຸງຮັກສາ ແລະ ນຳໃຊ້ແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນ ວັດແທກ;
5. ເສຍຄ່າບໍລິການ ສຳລັບ ການກວດຄືນ, ການກວດທຽບ, ການສອບທຽບ ແລະ ການທົດສອບແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນວັດແທກ;
6. ຢັ້ງຢືນຫຼັກຖານການກວດຄືນ, ການກວດທຽບ, ການສອບທຽບ ແລະ ການທົດສອບ ແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນວັດແທກ ຕາມຄວາມຕ້ອງການຂອງອົງການທີ່ກ່ຽວຂ້ອງຂອງລັດ;
7. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

# ພາກທີ IV
# ຂໍ້ຫ້າມ

## ມາດຕາ 34 (ປັບປຸງ) ຂໍ້ຫ້າມສໍາລັບຜູ້ດໍາເນີນທຸລະກິດ

ຫ້າມຜູ້ດໍາເນີນທຸລະກິດກ່ຽວກັບວຽກງານວັດແທກ ມີພຶດຕິກໍາ ດັ່ງນີ້:

1. ສະໜອງ, ຂາຍ ຫຼື ສະເໜີຂາຍສິນຄ້າ ແລະ ບໍລິການໃນປະລິມານຕໍ່າກວ່າຄວາມຕ້ອງການຂອງຜູ້ຊື້ ຫຼື ຜູ້ຊົມໃຊ້;
2. ຄອບຄອງ, ຕິດຕັ້ງ ຫຼື ນໍາໃຊ້ ແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນວັດແທກ ທີ່ຢູ່ພາຍໃຕ້ການຄວບຄຸມ ຊຶ່ງບໍ່ໄດ້ຕິດກາໝາຍຕາມລະບຽບການ ຫຼື ບໍ່ປະຕິບັດຕາມລະບຽບການກວດກາ;
3. ສະແດງປະລິມານທີ່ຄິດໄລ່ ຫຼື ເຈດຕະນາເຮັດໃຫ້ຜູ້ອື່ນເຂົ້າໃຈຜິດ ຫຼື ເປັນການຫຼອກລວງຜູ້ອື່ນ;
4. ໂຄສະນາຂາຍສິນຄ້າ ທີ່ບໍ່ຖືກຕ້ອງທາງດ້ານຈໍານວນ, ປະລິມານ ແລະ ນໍ້າໜັກ;
5. ສະແດງການວັດແທກຄຸນນະພາບຂອງສິນຄ້າ ທີ່ໃຊ້ກໍານົດລາຄາ ຫຼື ລະດັບຄຸນນະພາບ ຂອງສິນຄ້າບໍ່ຖືກຕ້ອງ;
6. ລະເມີດລະບຽບການກ່ຽວກັບການວັດແທກ, ການບັນທຶກ, ການສົ່ງຂໍ້ມູນ, ລາຍການທີ່ໄດ້ບັນທຶກໃຫ້ແກ່ເຈົ້າໜ້າທີ່ຄຸ້ມຄອງ ແລະ ກວດກາວຽກງານວັດແທກ;
7. ລະເມີດການສະເໜີ ຫຼື ການແນະນໍາຂອງເຈົ້າໜ້າທີ່ຄຸ້ມຄອງ ແລະ ກວດກາວຽກງານວັດແທກ;
8. ຂັດຂວາງ ຫຼື ຖ່ວງດຶງການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ຄຸ້ມຄອງ ແລະ ກວດກາວຽກງານວັດແທກ;
9. ຕິດກາໝາຍຢັ້ງຢືນ ຫຼື ກາໝາຍການກວດຄືນ ທີ່ປອມແປງ ຫຼື ຜິດລະບຽບກົດໝາຍ;

10. ລະເມີດລະບຽບການກ່ຽວກັບການກວດຄືນ, ການກວດທຽບ, ການສອບທຽບ ແລະ ການທົດສອບແບບວັດແທກ, ເຄື່ອງມື ແລະ ອຸປະກອນວັດແທກຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້;

11. ຖອນອຸປະກອນລ໋ອກ, ລອກ, ແກະ ສະຕິກເກີ, ກາໝາຍອອກຈາກແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນວັດແທກໂດຍບໍ່ໄດ້ຮັບອະນຸຍາດຈາກອົງການທີ່ກ່ຽວຂ້ອງຂອງລັດ;

12. ນຳເອົາຜົນການວັດແທກທີ່ບໍ່ຖືກຕ້ອງ ຫຼື ແບບຫຼອກລວງລົງໂຄສະນາໃນສື່ມວນຊົນ;

13. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

**ມາດຕາ 35 (ປັບປຸງ) ຂໍ້ຫ້າມສຳລັບເຈົ້າໜ້າທີ່ຄຸ້ມຄອງ ແລະ ກວດກາວຽກງານວັດແທກ**

ຫ້າມເຈົ້າໜ້າທີ່ຄຸ້ມຄອງ ແລະ ກວດກາວຽກງານວັດແທກ ມີພຶດຕິກຳ ດັ່ງນີ້:

1. ຂາດຄວາມຮັບຜິດຊອບ ຫຼື ປະລະໜ້າທີ່ ຕໍ່ວຽກງານວັດແທກ;

2. ປະຕິບັດໜ້າທີ່ໂດຍບໍ່ມີຄວາມຍຸຕິທຳ ຫຼື ລຳອຽງຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ;

3. ທວງເອົາ, ຂໍເອົາ, ຮັບເອົາ ສິນບົນ ຫຼື ສວຍໃຊ້ຕຳແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ, ຄອບຄົວ ແລະ ຍາດພີ່ນ້ອງ;

4. ບັງຄັບ, ນາບຂູ່, ໃຊ້ຄວາມຮຸນແຮງຕໍ່ບຸກຄົນອື່ນ ກ່ຽວກັບວຽກງານວັດແທກ;

5. ປອມແປງ, ແກ່ຍາວເວລາ ຫຼື ຖ່ວງດຶງເອກະສານ ກ່ຽວກັບວຽກງານວັດແທກ;

6. ມີພຶດຕິກຳອື່ນທີ່ເປັນການລະເມີດລະບຽບກົດໝາຍ.

# ພາກທີ V
# ການແກ້ໄຂຂໍ້ຂັດແຍ່ງ

## ມາດຕາ 36 ຫຼັກການແກ້ໄຂຂໍ້ຂັດແຍ່ງ

ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບວຽກງານວັດແທກ ຕ້ອງປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ສະເໝີພາບ;
2. ເປັນທໍາ;
3. ວ່ອງໄວ, ຖືກຕ້ອງ ແລະ ສອດຄ່ອງກັບລະບຽບກົດໝາຍ.

## ມາດຕາ 37 (ປັບປຸງ) ຮູບການແກ້ໄຂຂໍ້ຂັດແຍ່ງ

ຂໍ້ຂັດແຍ່ງກ່ຽວກັບວຽກງານວັດແທກ ສາມາດແກ້ໄຂດ້ວຍຮູບການໃດໜຶ່ງ ດັ່ງນີ້:

1. ການປະນີປະນອມ ແລະ ການໄກ່ເກັ່ຍ;
2. ການແກ້ໄຂທາງດ້ານບໍລິຫານ;
3. ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການຮ້ອງຟ້ອງຕໍ່ສານປະຊາຊົນ;
5. ການແກ້ໄຂຂໍ້ຂັດແຍ່ງທີ່ມີລັກສະນະສາກົນ.

**ມາດຕາ 38 ການປະນີປະນອມ ແລະ ການໄກ່ເກ່ຍ**

ໃນກໍລະນີມີຂໍ້ຂັດແຍ່ງກ່ຽວກັບວຽກງານວັດແທກໃຫ້ຄູ່ກໍລະນີພະຍາຍາມແກ້ໄຂຂໍ້ຂັດແຍ່ງນັ້ນດ້ວຍການປຶກສາຫາລື, ການປະນີປະນອມ ແລະ ການໄກ່ເກ່ຍເພື່ອເຮັດໃຫ້ຂໍ້ຂັດແຍ່ງນັ້ນສິ້ນສຸດລົງ.

**ມາດຕາ 39 (ປັບປຸງ) ການແກ້ໄຂທາງດ້ານບໍລິຫານ**

ໃນກໍລະນີມີຂໍ້ຂັດແຍ່ງກ່ຽວກັບວຽກງານວັດແທກ ຄູ່ກໍລະນີມີສິດສະເໜີໃຫ້ຂະແໜງການທີ່ກ່ຽວຂ້ອງພິຈາລະນາແກ້ໄຂຕາມຄວາມຮັບຜິດຊອບຂອງຕົນ.

**ມາດຕາ 40 (ປັບປຸງ) ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ໃນກໍລະນີ ມີຂໍ້ຂັດແຍ່ງກ່ຽວກັບວຽກງານວັດແທກ ຄູ່ກໍລະນີສາມາດແກ້ໄຂຂໍ້ຂັດແຍ່ງນັ້ນໂດຍຜ່ານອົງການແກ້ໄຂຂໍ້ຂັດແຍ່ງດ້ານເສດຖະກິດ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າ ດ້ວຍການແກ້ໄຂຂໍ້ຂັດແຍ່ງດ້ານເສດຖະກິດຕາມການຕົກລົງກັນ.

**ມາດຕາ 41 (ປັບປຸງ) ການຮ້ອງຟ້ອງຕໍ່ສານປະຊາຊົນ**

ໃນກໍລະນີ ມີຂໍ້ຂັດແຍ່ງກ່ຽວກັບວຽກງານວັດແທກ ຄູ່ກໍລະນີ ສາມາດຮ້ອງຟ້ອງຕໍ່ສານປະຊາ ຊົນ ເພື່ອພິຈາລະນາແກ້ໄຂຂໍ້ຂັດແຍ່ງດັ່ງກ່າວ ຕາມລະບຽບກົດໝາຍ.

**ມາດຕາ 42 ການແກ້ໄຂຂໍ້ຂັດແຍ່ງທີ່ມີລັກສະນະສາກົນ**

ໃນກໍລະນີມີຂໍ້ຂັດແຍ່ງກ່ຽວກັບວຽກງານວັດແທກທີ່ມີລັກສະນະສາກົນ ການແກ້ໄຂຂໍ້ຂັດແຍ່ງນັ້ນ ໃຫ້ອີງໃສ່ກົດໝາຍພາຍໃນປະເທດ ຫຼື ສັນຍາທີ່ໄດ້ຕົກລົງຮ່ວມກັນ ຫຼື ສັນຍາສາກົນ ຫຼື ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

# ພາກທີ VI
# ການຄຸ້ມຄອງ ແລະ ການກວດກາວຽກງານວັດແທກ
## ໝວດທີ 1
## ການຄຸ້ມຄອງວຽກງານວັດແທກ

### ມາດຕາ 43 (ປັບປຸງ) ອົງການຄຸ້ມຄອງວຽກງານວັດແທກ

ລັດຖະບານ ຄຸ້ມຄອງວຽກງານວັດແທກ ຢ່າງລວມສູນເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບກະຊວງອື່ນ ເປັນຕົ້ນ ກະຊວງອຸດສາຫະກຳ ແລະ ການຄ້າ, ໂຍທາທິການ ແລະ ຂົນສົ່ງ, ສາທາລະນະສຸກ, ກະສິກຳ ແລະ ປ່າໄມ້, ພະລັງງານ ແລະ ບໍ່ແຮ່, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານວັດແທກປະກອບດ້ວຍ:

1. ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ;
2. ພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນ;
3. ຫ້ອງການວິທະຍາສາດ ແລະ ເຕັກໂນໂລຊີ ເມືອງ, ເທດສະບານ.

ໃນກໍລະນີຈຳເປັນ ອາດຈະສ້າງຕັ້ງໜ່ວຍງານວິຊາການວັດແທກປະຈຳບ້ານ, ສູນການຄ້າ, ຕະຫຼາດກໍໄດ້.

### ມາດຕາ 44 ສິດ ແລະ ໜ້າທີ່ຂອງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ

ໃນການຄຸ້ມຄອງວຽກງານວັດແທກ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີມີສິດ ແລະ ໜ້າທີ່ດັ່ງນີ້:

1. ຄົ້ນຄວ້າແຜນຍຸດທະສາດ, ນະໂຍບາຍ, ລະບຽບກົດໝາຍ, ແຜນການ ແລະ ໂຄງການ ກ່ຽວກັບວຽກງານວັດແທກ ເພື່ອສະເໜີຕໍ່ລັດຖະບານພິຈາລະນາ;

2. ຜັນຂະຫຍາຍແຜນຍຸດທະສາດ, ນະໂຍບາຍຂອງລັດຖະບານ ກ່ຽວກັບວຽກງານ ວັດແທກໃຫ້ເປັນແຜນການ, ແຜນງານ ແລະ ໂຄງການຂອງຕົນພ້ອມທັງຊີ້ນຳ ການຈັດຕັ້ງປະຕິບັດ;

3. ໂຄສະນາ, ເຜີຍແຜ່ລະບຽບກົດໝາຍ, ຈັດການຝຶກອົບຮົມ, ໃຫ້ຄຳປຶກສາທາງດ້ານ ວິ ຊາການກ່ຽວກັບວຽກງານວັດແທກໃນຂອບເຂດທົ່ວປະເທດ;

4. ຮັບແຈ້ງການເກັບຮັກສາແມ່ແບບວັດແທກຂັ້ນໜຶ່ງ, ສ້າງ, ຜະລິດ, ເກັບຮັກສາ ແລະ ປັບປຸງ ແມ່ແບບວັດແທກ ແລະ ເຜີຍແຜ່ຫົວໜ່ວຍວັດແທກຢ່າງຕໍ່ເນື່ອງ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຕົວຈິງ;

5. ຊີ້ນຳ ແລະ ຕິດຕາມການຄຸ້ມຄອງ ແລະ ການນຳໃຊ້ແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນວັດແທກຢູ່ທ້ອງຖິ່ນ;

6. ດຳເນີນການກວດຄືນ, ການກວດທຽບ, ການສອບທຽບ, ການທົດສອບຄວາມ ຖືກຕ້ອງຂອງແມ່ແບບວັດແທກ;

7. ປະກາດໃຊ້, ປ່ຽນແປງໃບຢັ້ງຢືນ, ກາໝາຍ, ສະຕິກເກີ, ອຸປະກອນລ໋ອກ ເຄື່ອງມື ແລະ ອຸປະກອນວັດແທກ, ຍົກເລີກປະເພດການຢັ້ງຢືນດັ່ງກ່າວ;

8. ຄົ້ນຄວ້າມາດຕະການສະກັດກັ້ນ ການຈຳໜ່າຍສິນຄ້າ ທີ່ບໍ່ສອດຄ່ອງກັບເງື່ອນໄຂ ການວັດແທກ, ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ລະບຽບການກ່ຽວກັບ ວຽກງານວັດແທກ;

9. ສ້າງຕັ້ງລະບົບຂໍ້ມູນຂ່າວສານ, ກໍ່ສ້າງພື້ນຖານໂຄງລ່າງ ທາງດ້ານວັດຖຸເຕັກນິກ ກ່ຽວກັບວຽກງານວັດແທກ;

10. ປັບປຸງກົງຈັກການຈັດຕັ້ງຂັ້ນລຸ່ມຂອງຕົນ ໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ ໂດຍປະສານສົມທົບກັບອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;

11. ພິຈາລະນາ ແລະ ແກ້ໄຂຄຳສະເໜີ ຂອງພາກສ່ວນຕ່າງໆ ກ່ຽວກັບວຽກງານວັດແທກ;

12. ພົວພັນ, ຮ່ວມມືກັບສາກົນ ແລະ ເຂົ້າຮ່ວມກິດຈະກຳຂອງສາກົນໃນຂົງເຂດວຽກງານ ວັດແທກ;

13. ປະເມີນຜົນ, ສະຫຼຸບ, ລາຍງານ ການຈັດຕັ້ງປະຕິບັດວຽກງານວັດແທກຕໍ່ລັດຖະບານ ຢ່າງເປັນປົກກະຕິ;

14. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ມາດຕາ 45 ສິດ ແລະ ໜ້າທີ່ຂອງພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນ

ໃນການຄຸ້ມຄອງວຽກງານວັດແທກ ພະແນກ ວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນມີສິດ ແລະ ໜ້າທີ່ຕາມຂອບເຂດຄວາມຮັບຜິດຊອບຂອງຕົນດັ່ງນີ້:

1. ຜັນຂະຫຍາຍແຜນຍຸດທະສາດ, ນະໂຍບາຍ, ຄຳສັ່ງ, ຄຳແນະນຳຂອງຂັ້ນເທິງມາເປັນ ແຜນການ ແລະ ໂຄງການ ກ່ຽວກັບວຽກງານວັດແທກ ພ້ອມທັງຈັດຕັ້ງປະຕິບັດ;
2. ໂຄສະນາ, ເຜີຍແຜ່ກົດໝາຍ, ລະບຽບການຕ່າງໆ, ສະເໜີສ້າງ, ບຳລຸງ ແລະ ຍົກລະດັບພະນັກງານກ່ຽວກັບວຽກງານວັດແທກ;
3. ຄຸ້ມຄອງ, ຕິດຕາມການຈັດຕັ້ງປະຕິບັດວຽກງານວັດແທກ;
4. ສະໜອງຂໍ້ມູນຂ່າວສານ, ສະເໜີກໍ່ສ້າງພື້ນຖານໂຄງລ່າງທາງດ້ານວັດຖຸເຕັກນິກກ່ຽວກັບ ວຽກງານວັດແທກ;

5. ດຳເນີນການຄຸ້ມຄອງ, ຕິດຕາມ ການນຳໃຊ້ເຄື່ອງມື ແລະ ອຸປະກອນ ວັດແທກ ໃນຕະຫຼາດ, ສູນການຄ້າ ເພື່ອຮັບປະກັນໃຫ້ຜູ້ຊົມໃຊ້ໄດ້ຮັບການວັດແທກທີ່ເປັນທຳ ແລະ ມີການປະຕິບັດຕາມລະບຽບກົດໝາຍ ຢ່າງຄົບຖ້ວນ;

6. ດຳເນີນການກວດຄືນ, ການກວດທຽບ, ການສອບທຽບ, ການທົດສອບຄວາມຖືກຕ້ອງຂອງເຄື່ອງມື ແລະ ອຸປະກອນວັດແທກ;

7. ສະເໜີຍົກເລີກປະເພດການຢັ້ງຢືນທີ່ໄດ້ກຳນົດໄວ້ໃນມາດຕາ 25 ຂອງກົດໝາຍສະບັບນີ້ຕໍ່ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເພື່ອພິຈາລະນາ;

8. ພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງພາກສ່ວນຕ່າງໆ ກ່ຽວກັບວຽກງານວັດແທກ;

9. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຜະລິດ, ການນຳເຂົ້າ, ການນຳໃຊ້ ເຄື່ອງມື ແລະ ອຸປະກອນ ວັດແທກ;

10. ພົວພັນ ແລະ ຮ່ວມມືກັບຕ່າງປະເທດໃນຂົງເຂດວຽກງານວັດແທກ ຕາມການມອບໝາຍຂອງຂັ້ນເທິງ;

11. ປະເມີນຜົນສະຫຼຸບ, ລາຍງານການຈັດຕັ້ງປະຕິບັດວຽກງານວັດແທກໃຫ້ຂັ້ນເທິງຂອງຕົນຢ່າງເປັນປົກກະຕິ;

12. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 46 (ໃໝ່) ສິດ ແລະ ໜ້າທີ່ຂອງ**ຫ້ອງການວິທະຍາສາດ ແລະ ເຕັກໂນໂລຊີ**ເມືອງ, ເທດສະບານ**

ໃນການຄຸ້ມຄອງວຽກງານວັດແທກ ຫ້ອງການວິທະຍາສາດ ແລະ ເຕັກໂນໂລຊີເມືອງ, ເທດສະບານ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນດັ່ງນີ້:

1. ຈັດຕັ້ງປະຕິບັດ ແຜນການ, ໂຄງການ, ຄຳສັ່ງ, ຄຳແນະນຳຂອງຂັ້ນເທິງ ກ່ຽວກັບວຽກງານວັດແທກ;
2. ເຜີຍແຜ່ ກົດໝາຍ, ລະບຽບການຕ່າງໆ, ສະເໜີສ້າງ, ບຳລຸງ ແລະ ຍົກລະດັບພະນັກງານກ່ຽວກັບວຽກງານວັດແທກ;
3. ຄຸ້ມຄອງ, ຕິດຕາມການຈັດຕັ້ງປະຕິບັດວຽກງານວັດແທກ;
4. ສະໜອງຂໍ້ມູນຂ່າວສານ, ສະເໜີກໍ່ສ້າງພື້ນຖານໂຄງລ່າງທາງດ້ານວັດຖຸເຕັກນິກກ່ຽວກັບວຽກງານວັດແທກ;
5. ດຳເນີນການຄຸ້ມຄອງ, ຕິດຕາມການນຳໃຊ້ ເຄື່ອງມື ແລະ ອຸປະກອນວັດແທກ ໃນຕະຫຼາດ, ສູນການຄ້າ ເພື່ອຮັບປະກັນໃຫ້ຜູ້ຊົມໃຊ້ໄດ້ຮັບການວັດແທກທີ່ເປັນທຳ ແລະ ມີການປະຕິບັດຕາມລະບຽບກົດໝາຍຢ່າງຄົບຖ້ວນ;
6. ພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງພາກສ່ວນຕ່າງໆ ກ່ຽວກັບວຽກງານວັດແທກ;
7. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງໃນການຄຸ້ມຄອງ, ນຳໃຊ້ ເຄື່ອງມື ແລະ ອຸປະກອນວັດແທກໃນກໍລະນີທີ່ມີຄວາມຈຳເປັນ;
8. ປະເມີນຜົນ, ສະຫຼຸບ, ລາຍງານການຈັດຕັ້ງປະຕິບັດວຽກງານວັດແທກໃຫ້ຂັ້ນເທິງຂອງຕົນຢ່າງເປັນປົກກະຕິ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 47 (ໃໝ່) ສິດ ແລະ ໜ້າທີ່ຂອງຂະແໜງການອື່ນ**

ໃນການຄຸ້ມຄອງວຽກງານວັດແທກ ຂະແໜງການອື່ນທີ່ກ່ຽວຂ້ອງ ເປັນຕົ້ນ ກະຊວງອຸດສາຫະກຳ ແລະ ການຄ້າ, ໂຍທາທິການ ແລະ ຂົນສົ່ງ, ສາທາລະນະສຸກ, ກະສິກຳ ແລະ ປ່າໄມ້, ພະລັງງານ ແລະ ບໍ່ແຮ່, ຊັບພະຍາກອນທຳມະຊາດ ແລະ

ສິ່ງແວດລ້ອມ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງມີສິດ ແລະ ໜ້າທີ່ໃຫ້ການຮ່ວມມືກັບຂະແໜງການວິທະຍາສາດ ແລະ ເຕັກໂນໂລຊີໃນການຄວບຄຸມ ແລະ ຈັດຕັ້ງປະຕິບັດວຽກງານວັດແທກ ຕາມພາລະບົດບາດຂອງຕົນ.

## ໝວດທີ 2
## ການກວດກາວຽກງານວັດແທກ

### ມາດຕາ 48 ອົງການກວດກາວຽກງານວັດແທກ

ອົງການກວດກາວຽກງານວັດແທກ ປະກອບດ້ວຍ:

1. ອົງການກວດກາພາຍໃນຊຶ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງວຽກງານວັດແທກ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 43 ຂອງກົດໝາຍສະບັບນີ້;
2. ອົງການກວດກາພາຍນອກຊຶ່ງມີສະພາແຫ່ງຊາດ, ອົງການກວດກາລັດຖະບານ ແລະ ຕ້ານການສໍ້ລາດບັງຫຼວງ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ສື່ມວນຊົນ ແລະ ປະຊາຊົນ.

### ມາດຕາ 49 ສິດ ແລະ ໜ້າທີ່ ຂອງອົງການກວດກາພາຍໃນ

ອົງການກວດກາພາຍໃນກ່ຽວກັບວຽກງານວັດແທກ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ກວດກາການຈັດຕັ້ງປະຕິບັດລະບຽບກົດໝາຍ ກ່ຽວກັບການວັດແທກ;
2. ເຂົ້າຮ່ວມໃນການດໍາເນີນການສືບສວນ - ສອບສວນ ຄະດີກ່ຽວກັບວຽກງານວັດແທກ;
3. ສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງພິຈາລະນາການປະຕິບັດມາດຕະການຕໍ່ຜູ້ລະເມີດລະບຽບກົດໝາຍ ກ່ຽວກັບການວັດແທກ;

4. ສະຫຼຸບຜົນຂອງການປະຕິບັດວຽກງານກວດກາ ແຕ່ລະໄລຍະ ແລະ ລາຍງານໃຫ້ຂັ້ນເທິງຂອງຕົນຢ່າງເປັນປົກກະຕິ;
5. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

### ມາດຕາ 50 ສິດ ແລະ ໜ້າທີ່ຂອງອົງການກວດກາພາຍນອກ

ອົງການກວດກາພາຍນອກ ມີ ສິດ ແລະ ໜ້າທີ່ ກວດກາການຈັດຕັ້ງປະຕິບັດວຽກງານວັດແທກ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

### ມາດຕາ 51 ເຈົ້າໜ້າທີ່ຄຸ້ມຄອງ ແລະ ກວດກາວຽກງານວັດແທກ

ເຈົ້າໜ້າທີ່ຄຸ້ມຄອງ ແລະ ກວດກາວຽກງານວັດແທກຂັ້ນສູນກາງ ແມ່ນພະນັກງານສັງກັດລັດ ທີ່ຂຶ້ນກັບ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຊຶ່ງຖືກແຕ່ງຕັ້ງໂດຍລັດຖະມົນຕີກະຊວງ ວິທະຍາສາດ ແລະ ເຕັກໂນໂລຊີ.

ເຈົ້າໜ້າທີ່ຄຸ້ມຄອງ ແລະ ກວດກາວຽກງານວັດແທກຂັ້ນທ້ອງຖິ່ນ ແມ່ນພະນັກງານສັງກັດລັດ ທີ່ຂຶ້ນກັບພະແນກ ຫຼື ຫ້ອງການວິທະຍາສາດ ແລະ ເຕັກໂນໂລຊີຂັ້ນແຂວງ ຫຼື ຂັ້ນເມືອງ ຊຶ່ງຖືກແຕ່ງຕັ້ງໂດຍຫົວໜ້າພະແນກ ຫຼື ຫົວໜ້າຫ້ອງການວິທະຍາສາດ ແລະ ເຕັກໂນໂລຊີ ຂັ້ນແຂວງ ຫຼື ຂັ້ນເມືອງ.

ເຈົ້າໜ້າທີ່ຄຸ້ມຄອງ ແລະ ກວດກາວຽກງານວັດແທກ ປະຕິບັດສິດ ແລະ ໜ້າທີ່ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 49 ຂອງກົດໝາຍສະບັບນີ້.

### ມາດຕາ 52 (ໃໝ່) ເນື້ອໃນການກວດກາວຽກງານວັດແທກ

ເນື້ອໃນການກວດກາວຽກງານວັດແທກ ແມ່ນ ການຄວບຄຸມກິດຈະການຕ່າງໆ ເປັນຕົ້ນ ການຜະລິດ, ການນໍາເຂົ້າ, ການຈໍາໜ່າຍ, ການຕິດຕັ້ງ, ການນໍາໃຊ້, ການບໍາລຸງຮັກສາ, ການສ້ອມແປງ ເຄື່ອງມື ແລະ ອຸປະກອນວັດແທກເພື່ອໃຫ້ຖືກຕ້ອງຕາມລະບຽບກົດໝາຍ ກ່ຽວກັບການວັດແທກ.

**ມາດຕາ 53 (ໃໝ່) ການກວດກາຄວາມຖືກຕ້ອງຂອງພາຫະນະວັດແທກ**

ການກວດກາຄວາມຖືກຕ້ອງຂອງພາຫະນະວັດແທກ ແມ່ນ ການກວດກາພາຫະນະວັດແທກ ເພື່ອໃຫ້ມີຄວາມປອດໄພ ແລະ ສອດຄ່ອງກັບລະບຽບການ ກ່ອນການນຳໃຊ້ ແລະ ການບໍລິການ.

ການກວດກາພາຫະນະວັດແທກໃຫ້ປະຕິບັດ ດັ່ງນີ້:

1. ວາງຈຳໜ່າຍໃນຕະຫຼາດ, ສູນການຄ້າ ແລະ ນຳໃຊ້ເຂົ້າໃນການບໍລິການ;
2. ມີສະຫຼາກທີ່ຂຽນເປັນພາສາ ຕາມລະບຽບກົດໝາຍທີ່ໄດ້ກຳນົດໄວ້;
3. ໄດ້ຜ່ານການປະເມີນຄວາມສອດຄ່ອງກັບລະບຽບກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 54 ຮູບການກວດກາວຽກງານວັດແທກ**

ການກວດກາວຽກງານວັດແທກ ມີ ສາມຮູບການ ດັ່ງນີ້:

1. ການກວດກາ ຕາມແຜນການປົກກະຕິ;
2. ການກວດກາ ນອກແຜນການໂດຍແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາ ແບບກະທັນຫັນ;

ການກວດກາຕາມແຜນການປົກກະຕິແມ່ນ ການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ.

ການກວດການອກແຜນການໂດຍແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ການກວດກາແບບກະທັນຫັນ ແມ່ນ ການກວດກາໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາ ຮູ້ລ່ວງໜ້າ.

**ມາດຕາ 55 (ໃໝ່) ການປະເມີນຄວາມສອດຄ່ອງຂອງວຽກງານວັດແທກ**

ໃນກໍລະນີທີ່ຕ້ອງການຂໍ້ມູນການທົດສອບ ແລະ ຜົນການກວດທຽບ ໃຫ້ອະນຸຍາດນໍາໃຊ້ຫ້ອງທົດລອງທີ່ມີການຮັບຮອງແລ້ວເທົ່ານັ້ນ ເພື່ອດໍາເນີນການປະເມີນຄວາມສອດຄ່ອງ.

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ມີສິດແຕ່ງຕັ້ງການຈັດຕັ້ງຂອງລັດ ຫຼື ຂອງເອກະຊົນທີ່ມີຄວາມສາມາດພຽງພໍ ເພື່ອດໍາເນີນການປະເມີນຄວາມສອດຄ່ອງ, ການກວດສອບ ຫຼື ການກວດກາການປະຕິບັດລະບຽບກົດໝາຍກ່ຽວກັບການວັດແທກ. ການຈັດຕັ້ງດັ່ງກ່າວ ຕ້ອງມີຄວາມຍຸຕິທໍາ ແລະ ຕ້ອງປະຕິບັດໜ້າທີ່ຂອງຕົນຢ່າງເຂັ້ມງວດ.

ການແຕ່ງຕັ້ງການຈັດຕັ້ງດັ່ງກ່າວ ໃຫ້ປະຕິບັດຕາມຂັ້ນຕອນຂອງສາກົນຕາມການກໍານົດຂອງ "ກອງປະຊຸມການຮັບຮອງສາກົນ" (IAF) ແລະ ຂອງ "ອົງການຮັບຮອງຫ້ອງທົດລອງສາກົນ" (ILAC) ຫຼື ຕາມການຮັບຮອງ ຂອງອົງການຢັ້ງຢືນຂອງຕ່າງປະເທດໃດໜຶ່ງທີ່ໄດ້ຮັບການຮັບຮອງຕາມຂັ້ນຕອນຂອງ IAF ແລະ ILAC.

# ພາກທີ VII
# ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 56 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດລະບຽບກົດ ໝາຍ ກ່ຽວກັບການວັດແທກ ເປັນຕົ້ນ ການປະຕິບັດວຽກງານວັດແທກຢ່າງເຂັ້ມງວດ ແລະ ມີປະສິດທິພາບຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນຕາມລະບຽບການ.

**ມາດຕາ 57 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດລະບຽບກົດໝາຍກ່ຽວກັບການວັດແທກຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນທາງແພ່ງ ຫຼື ຖືກລົງໂທດທາງອາຍາຕາມກໍລະນີເບົາ ຫຼື ໜັກ.

**ມາດຕາ 58 ມາດຕະການສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດລະບຽບກົດໝາຍ ກ່ຽວກັບການວັດແທກ ແລະ ຂໍ້ຫ້າມທີ່ມີລັກສະນະເບົາ, ຄັ້ງທໍາອິດໂດຍບໍ່ເຈດຕະນາ, ບໍ່ມີຄວາມຈິງໃຈລາຍງານ, ບໍ່ເປັນການກະທໍາຜິດ ທາງອາຍາ ແລະ ກໍ່ຄວາມເສຍຫາຍທີ່ມີມູນຄ່າບໍ່ເກີນ ຫ້າແສນກີບ ຈະຖືກສຶກສາອົບຮົມ ແລະ ກ່າວເຕືອນ.

**ມາດຕາ 59 ມາດຕະການທາງວິໄນ**

ພະນັກງານ ຫຼື ເຈົ້າໜ້າທີ່ຄຸ້ມຄອງ ແລະ ກວດກາວຽກງານວັດແທກ ທີ່ລະເມີດກົດໝາຍສະບັບນີ້ ແລະ ຂໍ້ຫ້າມທີ່ມີລັກສະນະເບົາ ຊຶ່ງບໍ່ເປັນການກະທໍາຜິດທາງອາຍາ ແລະ ກໍ່ຄວາມເສຍຫາຍ ທີ່ມີມູນຄ່າບໍ່ເກີນ ຫ້າແສນກີບ, ບໍ່ມີຄວາມຈິງໃຈລາຍງານ, ຫຼົບຫຼີກຄວາມຜິດຂອງຕົນ ຈະຖືກລົງວິໄນເຊັ່ນ ຕິຕຽນ, ກ່າວເຕືອນຄວາມຜິດຕາມລະບຽບລັດຖະກອນພ້ອມທັງບັນທຶກໄວ້ໃນສໍານວນເອກະສານຊີວະປະຫວັດຂອງຜູ້ກ່ຽວ.

ໃນກໍລະນີທີ່ເຫັນວ່າການກະທໍານັ້ນມີລັກສະນະຮ້າຍແຮງ, ກໍ່ຄວາມເສັຍຫາຍທີ່ມີມູນຄ່າເກີນກວ່າຫ້າແສນກີບຂຶ້ນໄປ, ບໍ່ມີຄວາມຈິງໃຈລາຍງານ, ຫຼົບຫຼີກຄວາມຜິດກໍຈະຖືກລົງວິໄນຕາມແຕ່ລະກໍລະນີດັ່ງນີ້:

1. ໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ ແລະ ການຍ້ອງຍໍ;
2. ປົດຕໍາແໜ່ງ ຫຼື ຍົກຍ້າຍໄປຮັບໜ້າທີ່ອື່ນ ທີ່ມີຕໍາແໜ່ງຕໍ່າກວ່າເກົ່າ;
3. ໃຫ້ອອກຈາກລັດຖະກອນໂດຍບໍ່ໄດ້ຮັບນະໂຍບາຍໃດໆ.

ຜູ້ຖືກລົງວິໄນ ຕ້ອງສົ່ງຊັບສິນທີ່ຕົນໄດ້ມາໂດຍບໍ່ຖືກຕ້ອງນັ້ນ ຄືນໃຫ້ການຈັດຕັ້ງຢ່າງຄົບຖ້ວນ.

**ມາດຕາ 60  ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ລະເມີດກົດໝາຍສະບັບນີ້ໂດຍເຈດຕະນາ ຫຼື ດ້ວຍຄວາມບໍ່ລະມັດລະວັງເປັນຄັ້ງທີສອງຊຶ່ງບໍ່ເປັນການກະທຳຜິດທາງອາຍາຈະຖືກປັບໃໝສອງເທົ່າຂອງມູນຄ່າຄວາມເສຍຫາຍ.

**ມາດຕາ 61  ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ແລະ ຂໍ້ຫ້າມ ຊຶ່ງໄດ້ກໍ່ຄວາມເສຍຫາຍແກ່ຜູ້ອື່ນ ຈະຕ້ອງໃຊ້ແທນຄ່າເສຍຫາຍ ຕາມມູນຄ່າຕົວຈິງທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 62  ມາດຕະການທາງອາຍາ**

ບຸກຄົນ ທີ່ລະເມີດກົດໝາຍສະບັບນີ້ເປັນຕົ້ນຂໍ້ຫ້າມຊຶ່ງເປັນການກະທຳຜິດທາງອາຍາຈະຖືກລົງໂທດຕາມກົດໝາຍອາຍາ ແລ້ວ ແຕ່ກໍລະນີເບົາ ຫຼື ໜັກ.

**ມາດຕາ 63  ມາດຕະການໂທດເພີ່ມ**

ນອກຈາກໂທດຕົ້ນຕໍທີ່ໄດ້ກຳນົດໄວ້ໃນມາດຕາ 62 ຂອງກົດໝາຍສະບັບນີ້ ຜູ້ກະທຳຜິດຍັງຈະຖືກປະຕິບັດມາດຕະການໂທດເພີ່ມເຊັ່ນ: ໂຈະ ຫຼື ຖອນໃບອະນຸຍາດ, ໂຈະການນຳໃຊ້ເຄື່ອງມື ແລະ ອຸປະກອນວັດແທກ.

## ພາກທີ VIII
## ບົດບັນຍັດສຸດທ້າຍ

**ມາດຕາ 64  ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 65 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍການວັດແທກ ສະບັບເລກທີ 07/ສພຊ, ລົງວັນທີ 20 ທັນວາ 2010.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບ ກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

ປານີ ຢາທໍ່ຕູ້